ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ເລກທີ 2626 /ສທ

ນະຄອນຫລວງວຽງຈັນ, ວັນທີ 21 AUG 2023

# ຂໍ້ຕົກລົງ

## ວ່າດ້ວຍການຂຶ້ນທະບຽນຜະລິດຕະພັນເສີມສຸຂະພາບ

- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ ສະບັບເລກທີ 570/ນຍ, ລົງວັນທີ 16 ກັນຍາ 2021.
- ອີງຕາມ ໜັງສືສະເໜີຂອງ ກົມອາຫານ ແລະ ຢາ, ສະບັບເລກທີ 6943/ກອຢ, ລົງວັນທີ 14 ສິງຫາ 2023,

## ລັດຖະມົນຕີ ຕົກລົງ :
## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ ແລະ ລະດັບຄາດໝາຍ

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະຖານ ໃນການຂຶ້ນທະບຽນຜະລິດຕະພັນເສີມສຸຂະພາບ ເພື່ອຮັບປະກັນຄຸນນະພາບ, ປະສິດທິພາບ ແລະ ຄວາມປອດໄພ ຂອງຜະລິດຕະພັນທີ່ຜະລິດ, ປຸງແຕ່ງ, ນໍາເຂົ້າ-ສົ່ງອອກ ແລະ ຈໍາໜ່າຍ ແນໃສ່ເພື່ອປົກປ້ອງສຸຂະພາບຂອງຜູ້ບໍລິໂພກ ແລະ ປະຕິບັດໃຫ້ສອດຄ່ອງຕາມມາດຕະຖານ, ລະບຽບການຂອງພາກພື້ນ ແລະ ສາກົນ.

### ມາດຕາ 2 ຫຼັກການຂອງການຂຶ້ນທະບຽນຜະລິດຕະພັນເສີມສຸຂະພາບ

ຫຼັກການຂອງການຂຶ້ນທະບຽນຜະລິດຕະພັນເສີມສຸຂະພາບແມ່ນອີງໃສ່ ກົດໝາຍຢາ ແລະ ຜະລິດຕະພັນການແພດ, ບັນດາລະບຽບການພາຍໃນ, ພາກພື້ນ ແລະ ສາກົນ ເພື່ອໃຫ້ສອດຄ່ອງຕາມຫຼັກການຂອງການຄຸ້ມຄອງຜະລິດຕະພັນ



Scanned with CamScanner

ເສີມສຸຂະພາບ, ພ້ອມທັງເປັນການສົ່ງເສີມໃຫ້ມີຜະລິດຕະພັນພາຍໃນ ແລະ ນຳເຂົ້າ ໄດ້ຮັບການຂຶ້ນທະບຽນ ໃຫ້ຫຼາຍຂຶ້ນ ກ່ອນການນຳໃຊ້ ແລະ ຈໍລະຈອນ ຈຳໜ່າຍ ຢູ່ ສປປ ລາວ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1 **ການຂຶ້ນທະບຽນຜະລິດຕະພັນເສີມສຸຂະພາບ** ໝາຍເຖິງການແຈ້ງຊື່ຜະລິດຕະພັນ, ຮູບແບບ ສ່ວນປະກອບ ແລະ ຄວາມແຮງ ຕາມຮູບແບບການຂຶ້ນທະບຽນທີ່ໄດ້ຖືກກຳນົດໄວ້, ທຸກໆລາຍການຕ້ອງໄດ້ຮັບການຂຶ້ນທະບຽນຈາກ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ເພື່ອອຳນວຍຄວາມສະດວກໃນການຄຸ້ມຄອງ ແລະ ກວດກາ ຊຶ່ງສາມາດຄວບຄຸມໄດ້ໃນຂັ້ນຕອນຂອງການຜະລິດ, ປຸງແຕ່ງ, ພາຍໃນປະເທດ ຫຼື ນຳເຂົ້າຈາກຕ່າງປະເທດ ແລະ ການຈໍລະຈອນຈຳໜ່າຍໃນ ສປປ ລາວ.

2 **ຜະລິດຕະພັນເສີມສຸຂະພາບ** ໝາຍເຖິງຜະລິດຕະພັນໃດໜຶ່ງ ທີ່ຖືກ ນຳໃຊ້ເພື່ອ ເສີມອາຫານ ແລະ ຮັກສາ, ຊ່ວຍເສີມຂະຫຍາຍ ແລະ ເສີມສ້າງໂຄງສ້າງຂອງຮ່າງກາຍໃຫ້ ແຂງແຮງ ເຊິ່ງ ມີ ໜຶ່ງ ຫຼື ຫຼາຍສ່ວນປະກອບ ລວມກັນດັ່ງຕໍ່ໄປນີ້:

- ວິຕາມິນ, ແຮ່ທາດ, ກົດອະມິໂນ, ກົດໄຂມັນ, ອັງຊິມ, probiotics (ຈຸລິນຊີຊ່ວຍເສີມສ້າງພູມຕ້ານທານ) ແລະ ສານຊີວະພາບອື່ນໆ.
- ສານທີ່ມາຈາກແຫຼ່ງ ທຳມະຊາດ, ລວມທັງວັດຖຸດິບຈາກ ພືດ, ສັດ ແລະ ແຮ່ທາດ ແລະ ວັດຖຸດິບຈາກພືດໃນຮູບແບບຂອງການຖອດຮິດ ລວມກັນ ຫຼື ແຍກທາດ.
- ແຫຼ່ງສັງເຄາະຂອງສ່ວນປະກອບທີ່ກ່າວມາໃນ ຈຸດທີ 1 ແລະ ຈຸດທີ 2 ອາດຈະຖືກນຳໃຊ້ເພື່ອ ຄວາມປອດໄພຕາມທີ່ໄດ້ຮັບການພິສູດ.

ຜະລິດຕະພັນເສີມສຸຂະພາບໄດ້ກຳນົດໃນຮູບແບບເມັດ, ເມັດເຄືອບ, ເມັດຫຍໍ້າ, ເມັດອົມ, ເມັດແຊ່ນ້ຳ, ແຄັບຊູນ, ຝຸ່ນຜົງ, ນ້ຳເຊື່ອມ, ນ້ຳແຂວນຕະກອນ.

3 **ການຍົກເວັ້ນເປັນຜະລິດຕະພັນເສີມສຸຂະພາບ** ໝາຍເຖິງຜະລິດຕະພັນເສີມສຸຂະພາບທີ່ລວມເອົາຜະລິດຕະພັນໃດໜຶ່ງທີ່ຈັດເປັນຄາບຂອງອາຫານ, ຮູບແບບສັກ, ມີສ່ວນປະສົມຂອງຈຸລັງເນື້ອເຫຍື່ອ, ອະໄວຍະວະ ຫຼື ສານໃດໆທີ່ມາຈາກຮ່າງກາຍຂອງຄົນ ແລະ ມີເສັ້ນທາງການນຳໃຊ້ທາງອື່ນ ນອກຈາກທາງປາກ.

4 **ຫຼັກຖານຂອງການກ່າວອ້າງ** ໝາຍເຖິງຂໍ້ມູນ ທີ່ໄດ້ລະບຸ ແນະນຳ ຫຼື ບົ່ງບອກວ່າຜະລິດຕະພັນເສີມສຸຂະພາບໄດ້ມີປະສິດທິຜົນຕ່າງໆທີ່ເປັນປະໂຫຍດ, ຊ່ວຍເສີມສ້າງ ແລະ ປັບປຸງໜ້າທີ່ການ ເຮັດໃຫ້ສຸຂະພາບແຂງແຮງຊ່ວຍຫຼຸດຜ່ອນຄວາມສ່ຽງຂອງອາການທີ່ກ່ຽວຂ້ອງກັບສຸຂະພາບ ຫຼື ພະຍາດຕ່າງໆ.

5 **ເອກະສານກຳກັບ** ໝາຍເຖິງຂໍ້ມູນທີ່ພິມ ແລະ ສະໜອງມາພ້ອມກັບພະຊະນະບັນຈຸ ຫຼື ການບັນຈຸເບື້ອງຕົ້ນ.

6 **ສະຫຼາກນ້ອຍ** ໝາຍເຖິງສະຫຼາກທີ່ມີເນື້ອທີ່ຈຳກັດໃນການໃສ່ຂໍ້ມູນຕ່ຳສຸດທີ່ຈຳເປັນ ໃນພາຊະນະບັນຈຸຂະໜາດນ້ອຍດັ່ງທີ່ໄດ້ອະທິບາຍໄວ້ໃນຂໍ້ກຳນົດໂດຍທົ່ວໄປຂອງສະຫຼາກສຳລັບຜະລິດຕະພັນເສີມສຸຂະພາບແຕ່ລະປະເທດຈະເປັນຜູ້ກຳນົດຂະໜາດຂອງສະຫຼາກນ້ອຍ.



Scanned with CamScanner

7 **ສະຫຼາກເທິງຫໍ່/ແຜງບັນຈຸ** ໝາຍເຖິງສະຫຼາກທີ່ ພິມຕິດໃສ່ ຫຼື ພິມໃສ່ເທິງແຜ່ນ ຫຼື ແຜງ ທີ່ຕ້ອງບັນຈຸໃສ່ໃນເຄື່ອງບັນຈຸອື່ນໆ ຫຼື ເຄື່ອງຫຸ້ມຫໍ່ ທີ່ມີສະຫຼາກສະແດງໃຫ້ເຫັນຂໍ້ມູນຕາມທີ່ລະບຸໄວ້ໃນຂໍ້ກຳນົດທົ່ວໄປ ສຳຫຼັບການຕິດສະຫຼາກຂອງຜະລິດຕະພັນເສີມສຸຂະພາບເພື່ອໃຫ້ຜູ້ບໍລິໂພກສາມາດຮັບຂໍ້ມູນຂ່າວສານດັ່ງກ່າວໄດ້ຢ່າງຖືກຕ້ອງ.

8 **ການນຳໃຊ້ ຫຼື ຂໍ້ບົ່ງໃຊ້** ໝາຍເຖິງຄຳຊີ້ແຈງເນື້ອໃນກ່ຽວກັບວັດຖຸປະສົງ ຫຼື ບັນດາຈຸດປະສົງການນຳໃຊ້ຂອງຜະລິດຕະພັນເສີມສຸຂະພາບ.

9 **ເຫດການບໍ່ເພິ່ງປະສົງ** ໝາຍເຖິງເຫດການໃດໜຶ່ງທີ່ເກີດຂຶ້ນໃນທາງທີ່ຜິດພາດ ຫຼື ເຮັດໃຫ້ສູນເສຍໃນຄຸນລັກສະນະຂອງຜະລິດຕະພັນເສີມສຸຂະພາບບໍ່ໄດ້ຮັບຜົນ, ເຊິ່ງຜົນເສຍຫາຍທີ່ເກີດຂຶ້ນອາດເຮັດໃຫ້ເກີດ ຜົນກະທົບຕໍ່ສຸຂະພາບທີ່ກໍ່ໃຫ້ເກີດ ການພິການ, ເຈັບເປັນ ຫຼື ອາດເຖິງແກ່ຊີວິດ ຂອງຜູ້ບໍລິໂພກ.

10 **ເຈົ້າຂອງຜະລິດຕະພັນ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນກິດຈະການ ຜະລິດ, ປຸງແຕ່ງ, ນຳເຂົ້າ-ສົ່ງອອກ, ຈຳໜ່າຍ ທີ່ໄດ້ຮັບອະນຸຍາດ ຈາກ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ.

11 **ການຈັດຕັ້ງ** ໝາຍເຖິງ ອົງການລັດ ທີ່ ໄດ້ຮັບອະນຸຍາດໃຫ້ ຜະລິດ, ປຸງແຕ່ງ, ນຳເຂົ້າ ຜະລິດຕະພັນເສີມສຸຂະພາບເພື່ອສະໜອງໃຫ້ແກ່ຕາໜ່າງສາທາລະນະສຸກ.

12 **ຜູ້ຜະລິດ** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດໃນການດຳເນີນການຜະລິດ, ຢ່າງນ້ອຍໃນໜຶ່ງຂັ້ນຕອນຂອງການຜະລິດ ຈົນຮອດ ຂັ້ນຕອນສຸດທ້າຍຂອງການປ່ອຍຜະລິດຕະພັນສຳເລັດຮູບ ທີ່ສອດຄ່ອງຕາມການຜະລິດທີ່ດີ ລວມທັງ ມາດຕະຖານອື່ນໆທີ່ກ່ຽວຂ້ອງ ທີ່ ກະຊວງສາທາລະນະສຸກ ວາງອອກ.

13 **ຜູ້ຈຳໜ່າຍ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດໃນຂົງເຂດ ຂອງຜະລິດຕະພັນເສີມສຸຂະພາບ ທີ່ໄດ້ລະບຸຊື່ຜູ້ຮັບອະນຸຍາດຜະລິດ, ປຸງແຕ່ງ, ຈຳໜ່າຍ ບຸກຄົນ ເຫລົ່ານີ້ ແມ່ນມີໜ້າທີ່ ຮັບຜິດຊອບຕໍ່ທຸກປະເດັນ ຂອງຜະລິດຕະພັນ ລວມທັງຄຸນນະພາບກ່ອນ ແລະ ຫຼັງການຈຳໜ່າຍຕາມເງື່ອນໄຂຂອງການອະນຸຍາດຈຳໜ່າຍ ເພື່ອຕິດຕາມຄຸນນະພາບ ແລະ ຜົນກະທົບຂອງການໃຊ້ຜະລິດຕະພັນຂອງຕົນ.

14 **ຕົວແທນຈຳໜ່າຍ** ໝາຍເຖິງບຸກຄົນ ຫຼື ນິຕິບຸກຄົນໃດໜຶ່ງ ທີ່ໄດ້ຮັບການມອບໝາຍຈາກເຈົ້າຂອງຜະລິດຕະພັນໃຫ້ຮັບຜິດຊອບ ແລະ ດຳເນີນການຂໍອະນຸຍາດເປັນຕົວແທນຈຳໜ່າຍຜະລິດຕະພັນເສີມສຸຂະພາບໃນ ສປປ ລາວ ພາຍຫຼັງໄດ້ຮັບອະນຸຍາດ ຈາກ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທີ່ຄຸ້ມຄອງ ຫຼື ຜູ້ທີ່ດຳເນີນທຸລະກິດການຜະລິດປຸງແຕ່ງ, ນຳເຂົ້າ-ສົ່ງອອກ, ເກັບຮັກສາ ແລະ ຈໍລະຈອນຈຳໜ່າຍ ຜະລິດຕະພັນເສີມສຸຂະພາບ ຢູ່ໃນ ສປປ ລາວ.

## ໝວດທີ 2
## ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ອາຫານ ແລະ ຢາ ແລະ ຜູ້ປະກອບການ

**ມາດຕາ 5 ສິດຂອງເຈົ້າໜ້າທີ່ອາຫານ ແລະ ຢາ**



Scanned with CamScanner

ສິດຂອງເຈົ້າໜ້າທີ່ອາຫານ ແລະ ຢາ ມີດັ່ງນີ້:

1. ປະຕິເສດການຮັບຄຳຮ້ອງຂໍຂຶ້ນທະບຽນທີ່ບໍ່ຖືກຕ້ອງຄົບຖ້ວນ;
2. ປະຕິເສດຮັບເອກະສານຄຳຮ້ອງຂໍຂຶ້ນທະບຽນໃນເວລານອກໂມງລັດຖະການ;
3. ຮ້ອງຮຽນໃນກໍລະນີມີການຕຳນິສິ່ງຂ່າວທີ່ບໍ່ມີຄວາມຈິງຈາກຜູ້ປະກອບການ;
4. ໄດ້ຮັບໂອກາດພັດທະນາຄວາມອາດສາມາດດ້ານເຕັກນິກວິຊາການ.

## ມາດຕາ 6 ສິດຂອງຜູ້ປະກອບການ

ສິດຂອງຜູ້ປະກອບການມີດັ່ງນີ້:

1. ມີສິດໃນການເປັນຕົວແທນຈຳໜ່າຍຜະລິດຕະພັນທີ່ຕົນເອງໄດ້ນຳມາຂຶ້ນທະບຽນໃນ ສປປ ລາວ ແຕ່ພຽງຜູ້ດຽວ;
2. ມີສິດມອບສິດໃຫ້ຜູ້ທີ່ດຳເນີນກິດຈະການ ຫຼື ທຸລະກິດ ກ່ຽວກັບ ບໍລິສັດ ນຳເຂົ້າ-ສົ່ງອອກ ດ້ານຢາ ແລະ ຜະລິດຕະພັນການແພດ ລວມທັງ ຜູ້ປະກອບການ ທີ່ ດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍ ຜະລິດຕະພັນເສີມສຸຂະພາບ ທີ່ໄດ້ຮັບອະນຸຍາດ ຈາກ ກະຊວງສາທາລະນະສຸກ ແລະ ຂະແໜງການທີ່ກ່ຽວຂ້ອງ;
3. ມີສິດໄດ້ຮັບຂໍ້ມູນ ແລະ ການຝຶກອົບຮົມດ້ານວິຊາການ ແລະ ລະບຽບການທີ່ກ່ຽວຂ້ອງກັບຜະລິດຕະພັນເສີມສຸຂະພາບຕາມຄວາມເໝາະສົມ;
4. ມີສິດຮ້ອງຮຽນໃນກໍລະນີບໍ່ໄດ້ຮັບຄວາມເປັນທຳໃນການຂຶ້ນທະບຽນຜະລິດຕະພັນເສີມສຸຂະພາບ;
5. ມີສິດ ສ້າງຕັ້ງສະມາຄົມຜະລິດຕະພັນເສີມສຸຂະພາບ ແລະ ເຂົ້າຮ່ວມສະມາຄົມຕາມລະບຽບການທີ່ວາງໄວ້.

## ມາດຕາ 7 ໜ້າທີ່ຂອງເຈົ້າໜ້າທີ່ອາຫານ ແລະ ຢາ

ໜ້າທີ່ຂອງເຈົ້າໜ້າຍທີ່ອາຫານ ແລະ ຢາ ມີດັ່ງນີ້:

1. ຮັບ ແລະ ກວດກາເອກະສານຄຳຮ້ອງຂໍຂຶ້ນທະບຽນ ຕາມລາຍການເອກະສານທີ່ກຳນົດໄວ້ໃນຄຳຮ້ອງ;
2. ຄົ້ນຄວ້າດ້ານວິຊາການ ແລະ ສັງລວມລາຍງານຕາມຂອບເວລາທີ່ໄດ້ກຳນົດໄວ້;
3. ຕິດຕາມກວດກາ ການຈັດຕັ້ງປະຕິບັດກ່ຽວກັບການຂຶ້ນທະບຽນຂອງຜູ້ປະກອບການ;
4. ປະເມີນຄວາມສ່ຽງຂອງຜະລິດຕະພັນ ແລະ ຜູ້ປະກອບການ;
5. ເກັບກຳ, ແລກປ່ຽນ ແລະ ໃຫ້ຂໍ້ມູນຂ່າວສານ ແລະ ລະບຽບການທີ່ກ່ຽວຂ້ອງ;
6. ຕິດຕາມກວດກາການລາຍງານເຫດການທີ່ບໍ່ເພິ່ງປະສົງຈາກການນຳໃຊ້ຜະລິດຕະພັນເສີມສຸຂະພາບ

## ມາດຕາ 8 ໜ້າທີ່ຂອງຜູ້ປະກອບການ

ໜ້າທີ່ຂອງຜູ້ປະກອບການ ມີດັ່ງນີ້:

1. ລາຍງານເຫດການຜິດປົກກະຕິຂອງຜະລິດຕະພັນເສີມສຸຂະພາບ ຫຼື ເຫດການບໍ່ເພິງປະສົງທີ່ເກີດຂຶ້ນກັບຜູ້ບໍລິໂພກ ບໍ່ວ່າຈະເປັນເຫດການທີ່ເກີດຂຶ້ນພາຍໃນ ສປປ ລາວ ຫຼື ຕ່າງປະເທດ ລວມເຖິງລາຍງານການແກ້ໄຂເພື່ອຄວາມປອດໄພຂອງການນຳໃຊ້ຜະລິດຕະພັນເສີມສຸຂະພາບດັ່ງກ່າວ ເຖິງ ກົມອາຫານ ແລະ ຢາ;



Scanned with CamScanner

2. ຈັດໃຫ້ມີຊ່ອງທາງການຮ້ອງຮຽນ, ບັນທຶກການຮ້ອງຮຽນ ແລະ ລະບົບການຈັດການຮ້ອງຮຽນຈາກຜູ້ບໍລິໂພກຕາມຄວາມເໝາະສົມ;
3. ຮັບຜິດຊອບຄ່າກວດກາວິໄຈດ້ານຄຸນນະພາບ ຂອງຜະລິດຕະພັນເສີມສຸຂະພາບຂອງຕົນ;
4. ຮັບຜິດຊອບທຳລາຍຜະລິດຕະພັນເສີມສຸຂະພາບທີ່ໝົດອາຍຸ ຫຼື ເສື່ອມຄຸນະພາບທີ່ຢູ່ພາຍໃຕ້ການຂຶ້ນທະບຽນ ແລະ ລາຍງານເຖິງ ກົມອາຫານ ແລະ ຢາ.

## ໝວດທີ 3
## ເງື່ອນໄຂການຂຶ້ນທະບຽນ

### ມາດຕາ 9 ປະເພດຂອງຜະລິດຕະພັນເສີມສຸຂະພາບ

ປະເພດຂອງຜະລິດຕະພັນເສີມສຸຂະພາບແມ່ນຈັດຕາມລະດັບຄວາມສ່ຽງຂອງຜະລິດຕະພັນໂດຍອີງໃສ່ຫຼັກຖານການກ່າວອ້າງຕາມຈຸດປະສົງ ຂອງການນຳໃຊ້ ເຊິ່ງຈັດເປັນ 3 ລະດັບ ຄື:

1. **ລະດັບຄວາມສ່ຽງຕ່ຳ** ແມ່ນຫຼັກຖານການກ່າວອ້າງເຖິງການເສີມເພື່ອບຳລຸງສຸຂະພາບໂດຍທົ່ວໄປ ຈາກຜົນທີ່ໄດ້ຮັບຈາກການເສີມເຂົ້າໄປໃນຮ່າງກາຍ ນອກຈາກການກິນອາຫານປະຈຳວັນ.
2. **ລະດັບຄວາມສ່ຽງກາງ** ແມ່ນຫຼັກຖານການກ່າວອ້າງເຖິງການເສີມທາງດ້ານໜ້າທີ່ການ ເພື່ອເປັນສ່ວນປະກອບດ້ານບວກຕໍ່ສຸຂະພາບ ຫຼື ປັບປຸງ ໜ້າທີ່ການ ຂອງຮ່າງກາຍໃຫ້ປົກກະຕິ.
3. **ລະດັບຄວາມສ່ຽງສູງ** ແມ່ນຫຼັກຖານການກ່າວອ້າງເຖິງການເສີມເພື່ອຫຼຸດຜ່ອນຄວາມສ່ຽງຈາກການກໍ່ໃຫ້ເກີດພະຍາດແມ່ນການປ່ຽນແປງ ຫຼື ຫຼຸດຜ່ອນປັດໃຈຄວາມສ່ຽງຂອງພະຍາດ ຫຼື ກ່ຽວຂ້ອງກັບບັນຫາສຸຂະພາບ.

### ມາດຕາ 10 ການປະກອບເອກະສານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ມີຈຸດປະສົງ ຂໍຂຶ້ນ ແລະ ຕໍ່ທະບຽນ ຜະລິດຕະພັນເສີມສຸຂະພາບ ທີ່ຜະລິດ, ປຸງແຕ່ງ ພາຍໃນ ແລະ ນຳເຂົ້າຕ້ອງປະກອບເອກະສານຕາມແບບຟອມທີ່ໄດ້ກຳນົດໄວ້ດັ່ງລຸ່ມນີ້:

1 **ການຂຶ້ນທະບຽນຜະລິດຕະພັນພາຍໃນ** ການຂຶ້ນທະບຽນຜະລິດຕະພັນພາຍໃນ ໃຫ້ປະກອບເອກະສານຕາມແບບຟອມຂໍອະນຸຍາດຜະລິດຕົວຢ່າງ, ພາຍຫຼັງໄດ້ຮັບແຈ້ງການອະນຸຍາດຜະລິດຕົວຢ່າງແລ້ວ ໃຫ້ປະກອບເອກະສານຂໍຂຶ້ນທະບຽນ (ຊຶ່ງລາຍລະອຽດແມ່ນໄດ້ລະບຸໄວ້ໃນແບບຟອມ) ພ້ອມດ້ວຍນຳເອົາຕົວຢ່າງຂອງທຸກຂະໜາດບັນຈຸເພື່ອກວດກາວິໄຈຄຸນນະພາບ (ເລກຊຸດຜະລິດໃຫ້ກົງກັບ ໃບວິໄຈຄຸນນະພາບຂອງຜະລິດຕະພັນ).

2 **ການຂຶ້ນທະບຽນຜະລິດຕະພັນນຳເຂົ້າ** ແມ່ນໃຫ້ປະກອບເອກະສານຕາມແບບຟອມ ຂໍຂຶ້ນທະບຽນ ພ້ອມດ້ວຍນຳເອົາຕົວຢ່າງຂອງທຸກຂະໜາດບັນຈຸມາໃນເວລາດຽວກັນ;

3 **ການຕໍ່ທະບຽນຜະລິດຕະພັນພາຍໃນ ແລະ ນຳເຂົ້າ** ໃຫ້ປະກອບເອກະສານ ຕາມແບບຟອມທີ່ໄດ້ກຳນົດໄວ້ ເພື່ອຂໍຕໍ່ທະບຽນ ຈຳນວນ 01 ຊຸດ/1 ຜະລິດຕະພັນ; ພ້ອມດ້ວຍນຳເອົາຕົວຢ່າງຂອງທຸກຂະໜາດບັນຈຸມາໃນເວລາດຽວກັນເພື່ອສົ່ງຜະລິດຕະພັນ ກວດກາ ວິໄຈຄຸນນະພາບ.



Scanned with CamScanner

**ມາດຕາ 11 ເງື່ອນໄຂການຮຽກຮ້ອງເອກະສານ**

1. ຂອບເຂດການຮຽກຮ້ອງເອກະສານສຳລັບຜະລິດຕະພັນເສີມສຸຂະພາບທີ່ມີຄວາມສ່ຽງຕ່ຳມີດັ່ງນີ້:

- ການບັນທຶກໄວ້ໃນເອກະສານອ້າງອີງເຊັ່ນ: ບົດຂຽນອ້າງອີງທີ່ໜ້າເຊື່ອຖື, ປຶ້ມຕຳລາອ້າງອີງ, ປະທານຸກົມ, ຫຼັກຖານສະໜັບສະໜູນທາງດ້ານວິທະຍາສາດ ຫຼື ປະຫວັດທີ່ເຮັດການບັນທຶກລາຍງານແບບດັ້ງເດີມ ຫຼື ເອກະສານທີ່ຕີພິມເຜີຍແຜ່ຈາກຜູ້ຊ່ຽວຊານທີ່ລາຍງານການນຳໃຊ້;

- ໄດ້ຮັບການຢັ້ງຢືນຈາກອົງການ ຫຼື ໜ່ວຍງານຄຸ້ມຄອງທີ່ກ່ຽວຂ້ອງ;

2. ຂອບເຂດການຮຽກຮ້ອງເອກະສານສຳລັບຜະລິດຕະພັນເສີມສຸຂະພາບທີ່ມີຄວາມສ່ຽງກາງມີດັ່ງນີ້:

- ມີການບັນທຶກໄວ້ໃນເອກະສານອ້າງອີງເຊັ່ນ: ບົດຂຽນອ້າງອີງທີ່ໜ້າເຊື່ອຖື, ປຶ້ມຕຳລາອ້າງອີງ, ປະທານຸກົມ, ຫຼັກຖານສະໜັບສະໜູນທາງດ້ານວິທະຍາສາດ;
- ໄດ້ຮັບການຢັ້ງຢືນຈາກອົງການ ຫຼື ໜ່ວຍງານຄຸ້ມຄອງທີ່ກ່ຽວຂ້ອງ;
- ປະຕິບັດຕາມຫຼັກການຄຸນນະພາບທີ່ດີ ໂດຍອີງຕາມຫຼັກຖານທາງດ້ານວິທະຍາສາດ ທີ່ເຮັດການສຶກສາກັບຄົນໂດຍອີງຕາມຄູ່ມືການຮຽກຮ້ອງທາງດ້ານປະສິດທິພາບຂອງອາຊຽນ.

3. ຂອບເຂດການຮຽກຮ້ອງເອກະສານສຳລັບຜະລິດຕະພັນເສີມສຸຂະພາບທີ່ມີຄວາມສ່ຽງສູງມີດັ່ງນີ້:

- ຄວາມສຳພັນລະຫວ່າງສ່ວນປະກອບຂອງຜະລິດຕະພັນເສີມສຸຂະພາບ ຫຼື ການຫຼຸດຄວາມສ່ຽງຕໍ່ພົນຂອງຜະລິດຕະພັນ ແລະ ພະຍາດໄດ້ຮັບການສະໜັບສະໜູນຈາກຫຼັກຖານວິທະຍາສາດທີ່ສອດຄ່ອງກັນ;
- ຂໍ້ຮຽກຮ້ອງກ່ຽວກັບການຊ່ວຍຫຼຸດຄວາມສ່ຽງຈາກການເກີດພະຍາດ ທີ່ຂຶ້ນກັບສ່ວນປະກອບຈະຕ້ອງມີປະລິມານຂອງສານອອກລິດທີ່ສະແດງໃຫ້ເຫັນວ່າ ມີປະສິດທິພາບຈາກຂໍ້ມູນທີ່ສາມາດຢືນຢັນ ແລະ ພິສູດໂດຍຫຼັກຖານທາງດ້ານວິທະຍາສາດທີ່ເຮັດການສຶກສາກັບຄົນ ທາງດ້ານເພສັຊວິທະຍາ, ທາງດ້ານພິດເບື່ອ ທີ່ຕີພິມ ແລະ ເຜີຍແຜ່ລົງວາລະສານ;
- ມີການບັນທຶກໄວ້ໃນເອກະສານອ້າງອີງ;
- ໄດ້ຮັບການຢັ້ງຢືນຈາກອົງການ ຫຼື ໜ່ວຍງານຄຸ້ມຄອງທີ່ກ່ຽວຂ້ອງ;
- ປະຕິບັດຕາມຫຼັກການສຳຄັນຂອງຂໍ້ຮຽກຮ້ອງຂອງຜະລິດຕະພັນເສີມສຸຂະພາບອາຊຽນ.

**ມາດຕາ 12 ການຮັບຄຳຮ້ອງຂໍຂຶ້ນທະບຽນ**

1 ການຮັບຄຳຮ້ອງຂໍຂຶ້ນທະບຽນຜະລິດຕະພັນເສີມສຸຂະພາບແມ່ນປະຕິບັດການຮັບເອກະສານທຸກໆວັນລັດຖະການ;

2 ແບບຟອມຄຳຮ້ອງຕ້ອງແມ່ນສະບັບຕົ້ນ ທີ່ມີກາຈ້ຳສີແດງ ເຊິ່ງ ມີຈຳໜ່າຍ ຢູ່ ກົມອາຫານ ແລະ ຢາ ຫຼື ດາວໂຫຼດ ເອົາແບບຟອມຄຳຮ້ອງໄດ້ ຢູ່ ເວັບໄຊສ໌ ຂອງ ກົມອາຫານ ແລະ ຢາ;

3 ສ່ວນເອກະສານອື່ນໆທີ່ ຄັດຕິດມານັ້ນ ຖ້າແມ່ນສະບັບສຳເນົາ ກໍ່ຕ້ອງໄດ້ເຊັນຢັ້ງຢືນ ພ້ອມມີກາຈ້ຳສຳເນົາຢ່າງຖືກຕ້ອງຕາມສະບັບເດີມຈາກບໍລິສັດ, ໂຮງງານ, ຫ້ອງປຸງແຕ່ງ.



Scanned with CamScanner

**ມາດຕາ 13 ເງື່ອນໄຂການພິຈາລະນາຂຶ້ນທະບຽນ**

1 ຄຳຮ້ອງຂໍຂຶ້ນທະບຽນຜະລິດຕະພັນເສີມສຸຂະພາບ ຈະໄດ້ຮັບການພິຈາລະນາກໍ່ຕໍ່ເມື່ອໄດ້ປະຕິບັດຕາມມາດຕາ 10 ຢ່າງຄົບຖ້ວນ;

2 ຜະລິດຕະພັນເສີມສຸຂະພາບທີ່ມີຄວາມສ່ຽງສູງ ຕ້ອງໄດ້ປະກອບເອກະສານທີ່ ຮຽກຮ້ອງ ໃນພາກຂອງການຢັ້ງຢືນຄຸນນະພາບ (ພາກຂອງຜະລິດຕະພັນ ແລະ ພາກຂອງສ່ວນປະກອບ), ພາກຂອງຂໍ້ມູນທາງ ຄຼີນິກ ແລະ ເອກະສານທາງການແພດ ເພື່ອ ຢັ້ງຢືນເຖິງຄວາມປອດໄພ ແລະ ປະສິດທິຜົນ ໂດຍຄັດຕິດຂໍ້ມູນ ຂອງການສຶກສາຄົ້ນຄວ້າທາງດ້ານວິທະຍາສາດ ຢ່າງຄົບຖ້ວນ;

3 ການຂຶ້ນທະບຽນຜະລິດຕະພັນເສີມສຸຂະພາບ ແມ່ນຕ້ອງໄດ້ຜ່ານການຄົ້ນຄວ້າຈາກຄະນະກຳມະການຂຶ້ນທະບຽນ ທີ່ໄດ້ຖືກແຕ່ງຕັ້ງ ຈາກ ທ່ານ ລັດຖະມົນຕີ ກະຊວງສາທາລະນະສຸກ;

4 ການກຳນົດເວລາຂອງການພິຈາລະນາ ແລະ ຄົ້ນຄວ້າ ການຂຶ້ນທະບຽນຜະລິດຕະພັນເສີມສຸຂະພາບລະດັບຕ່ຳ ແລະ ລະດັບກາງ ແມ່ນ 30 ວັນ, ສຳລັບ ລະດັບສູງ ແມ່ນ 60 ວັນ ແລະ ການຕໍ່ທະບຽນ ແມ່ນ 30 ວັນ ລັດຖະການ ສຳລັບຄວາມສ່ຽງທຸກປະເພດ;

5 ການຍື່ນເອກະສານຕໍ່ທະບຽນ ແມ່ນໃຫ້ຍື່ນພາຍໃນ 3 ເດືອນ ກ່ອນທະບຽນໝົດອາຍຸ;

6 ຜະລິດຕະພັນເສີມສຸຂະພາບທີ່ໄດ້ຮັບອະນຸມັດຂຶ້ນທະບຽນແລ້ວ ຈະໄດ້ອອກເລກທະບຽນ ແລະ ໃບຢັ້ງຢືນໃຫ້, ຈາກນັ້ນ ຜູ້ໄດ້ຮັບອະນຸຍາດຈຶ່ງມີສິດ ຜະລິດ, ປຸງແຕ່ງ ຫຼື ນຳເຂົ້າ ແລະ ຈຳໜ່າຍ.

**ມາດຕາ 14 ຫຼັກການຂອງການກ່າວອ້າງກ່ຽວກັບການເສີມສຸຂະພາບ**

ທຸກການກ່າວອ້າງກ່ຽວກັບຜະລິດຕະພັນເສີມສຸຂະພາບ ຕ້ອງອີງໃສ່ຫຼັກການ ດັ່ງລຸ່ມນີ້:

1 ສອດຄ່ອງກັບຄຳນິຍາມຂອງຜະລິດຕະພັນເສີມສຸຂະພາບ;

2 ສາມາດໃຫ້ຜູ້ບໍລິໂພກ ເລືອກຜະລິດຕະພັນຕາມຂໍ້ມູນທີ່ໄດ້ຮັບ;

3 ສະໜັບສະໜູນການນຳໃຊ້ທີ່ປອດໄພມີປະໂຫຍດ ແລະ ໄດ້ຮັບການຢືນຢັນໂດຍມີຫຼັກຖານດ້ານຄຸນນະພາບທີ່ດີ;

4 ຮັກສາລະດັບຂອງການນຳໃຊ້ແບບພື້ນເມືອງ ແລະ/ຫຼື ເປັນຫຼັກຖານທາງດ້ານວິທະຍາສາດທີ່ສອດຄ່ອງກັບປະເພດຂອງການກ່າວອ້າງ;

5 ປະຕິບັດຕາມຂໍ້ແນະນຳທີ່ລະບຸໄວ້ໃນຫຼັກຖານ ຫຼື ຂໍ້ມູນອ້າງອີງ;

6 ບໍ່ຄວນເຮັດໃຫ້ເຂົ້າໃຈຜິດ ຫຼື ເປັນການຫຼອກລວງ;

7 ຕ້ອງໃຊ້ເພື່ອການບຳລຸງຮັກສາສຸຂະພາບ ແລະ ສົ່ງເສີມການນຳໃຊ້ຜະລິດຕະພັນທີ່ເປັນ ເສີມສຸຂະພາບເທົ່ານັ້ນ;

8 ຈຸດປະສົງນຳໃຊ້ແມ່ນເພື່ອຊ່ວຍບຳລຸງ, ຫຼຸດຜ່ອນ ແລະ ສົ່ງເສີມສຸຂະພາບເທົ່ານັ້ນ ບໍ່ໃຊ້ວ່າເປັນຢາ ຫຼື ປິ່ນປົວໃນລັກຊະນະ ເຊັ່ນ: ສຳລັບປິ່ນປົວ, ຮັກສາ ຫຼື ປ້ອງກັນພະຍາດ.



Scanned with CamScanner

ປະໂຫຍດ/ ປະສິດທິພາບຂອງຜະລິດຕະພັນ ແລະ / ຫຼື ສ່ວນປະກອບທີ່ອ້າງອີງແມ່ນຕ້ອງຢູ່ໃນພື້ນຖານຫຼັກການຂອງການພິສູດ ວິໄຈ ທັງໝົດທີ່ມີ, ໂດຍລວມທັງຂໍ້ມູນແບບປະກົດໃຫ້ເຫັນ ຫຼື ຂໍ້ມູນຮູບແບບປະຫວັດ ຕະຫຼອດມີຫຼັກຖານອື່ນໆ ທີ່ລະບຸໄວ້ໃນກໍລະນີທີ່ເຮັດໄດ້.

### ມາດຕາ 15 ຫຼັກການຈັດປະເພດຄວາມສ່ຽງ

1. ຄວາມສ່ຽງຕໍ່າ ມີຂອບເຂດເພື່ອການເສີມສ້າງດ້ານໂພສະນາການ ແລະ ການບໍາລຸງຮ່າງກາຍແບບທົ່ວໄປ, ໄດ້ຮັບພົນຈາກການເສີມນອກຈາກການກິນອາຫານປະຈໍາວັນ ແລະ ສະແດງຂອບເຂດການກ່າວອ້າງໄວ້ ດັ່ງນີ້:
- ການເສີມສ້າງໂພຊະນາການ;
- ຊ່ວຍການຈະເລີນເຕີບໂຕ ແລະ ການພັດທະນາທີ່ດີ;
- ບໍາລຸງຮ່າງກາຍ;
- ບັນເທົາອາການເມື່ອຍ, ອ່ອນເພຍ;
- ບໍາລຸງຮັກສາສຸຂະພາບໃຫ້ດີ.
2. ຄວາມສ່ຽງກາງ ມີຂອບເຂດເພື່ອປັບປຸງໜ້າທີ່ການ ຫຼື ການບໍາລຸງສ້າງ, ເສີມສ້າງ ແລະ ຟື້ນຟູ ໜ້າທີ່ການຂອງຮ່າງກາຍ, ເຮັດໃຫ້ໜ້າທີ່ການຂອງຮ່າງກາຍເຮັດວຽກຟື້ນຄືນສູ່ປົກກະຕິ ແລະ ສະແດງຂອບເຂດການກ່າວອ້າງໄວ້ດັ່ງນີ້:
- ບໍາລຸງ/ຊ່ວຍໃຫ້ສຸຂະພາບແຂງແຮງ;
- ບໍາລຸງ/ຊ່ວຍການເພີ່ມພູມຄຸ້ມກັນ;
- ຊ່ວຍເພີ່ມໃຫ້ໜ້າທີ່ການຂອງອະໄວຍະວະໃດໜຶ່ງແຂງແຮງ;
- ຊ່ວຍໃຫ້ການປະຕິບັດງານທາງດ້ານສະໝອງດີຂຶ້ນ;
- ສົ່ງເສີມສຸຂະພາບຜິວ, ຜົມ, ເລັບ;
- ຊ່ວຍຕ້ານຄວາມແກ່ ແລະ ອື່ນໆ;
3. ຄວາມສ່ຽງສູງ ມີຂອບເຂດເພື່ອການປ່ຽນແປງທີ່ສໍາຄັນ ຫຼື ຊ່ວຍຫຼຸດຜ່ອນປັດໃຈຄວາມສ່ຽງຂອງການເປັນພະຍາດ ຫຼື ມີສະພາວະທີ່ກ່ຽວຂ້ອງກັບສຸຂະພາບ ແລະ ສະແດງຂອບເຂດການກ່າວອ້າງໄວ້ດັ່ງນີ້:
- ຊ່ວຍຫຼຸດຜ່ອນຄວາມສ່ຽງຂອງກະດູກພ່ອຍ ໂດຍການເສີມສ້າງຄວາມແຂງແຮງຂອງກະດູກ;
- ຊ່ວຍຫຼຸດຜ່ອນຄວາມສ່ຽງໄຂມັນໃນເລືອດ;
- ຊ່ວຍຫຼຸດຜ່ອນ;

### ມາດຕາ 16 ການປ່ຽນແປງຫຼັງການຂຶ້ນທະບຽນ

ທຸກການປ່ຽນແປງ ພາຍຫຼັງການຂຶ້ນທະບຽນແລ້ວ ຜູ້ດໍາເນີນທຸລະກິດຕ້ອງໄດ້ສະເໜີຕໍ່ກົມອາຫານ ແລະ ຢາ ເພື່ອພິຈາລະນາການປ່ຽນແປງ ດັ່ງລຸ່ມນີ້:

1 ການປ່ຽນແປງສ່ວນທີ່ສໍາຄັນ "(Major Variation)" ໝາຍເຖິງ ການປ່ຽນແປງ ໃດໜຶ່ງທີ່ກ່ຽວຂ້ອງ ກັບຜະລິດຕະພັນທີ່ໄດ້ຂຶ້ນທະບຽນແລ້ວ ເຊິ່ງເປັນການປ່ຽນແປງທີ່ກະທົບໂດຍກົງເຖິງບັນຫາດ້ານຄຸນນະພາບ, ຄວາມປອດໄພ



Scanned with CamScanner

ແລະ ປະສິດທິພາບຂອງຜະລິດຕະພັນນັ້ນ ເຊັ່ນ: ການປັບປຸງສູດຕໍາລາ, ການປ່ຽນແປງເຕັກນິກການຜະລິດບາງຂັ້ນຕອນ, ປ່ຽນແປງເຕັກນິກການກວດກາຄຸນນະພາບ, ການປ່ຽນແປງອາຍຸຂອງຜະລິດຕະພັນ, ການປ່ຽນສະຖານທີ່ການຜະລິດ ແລະ ອື່ນໆ, ໃນກໍລະນີຜະລິດຕະພັນນໍາເຂົ້າຕ້ອງມີຫຼັກຖານຢັ້ງຢືນເຖິງການປ່ຽນແປງທີ່ຮັບການອະນຸມັດຈາກເຈົ້າໜ້າທີ່ຄຸ້ມຄອງ ຂອງປະເທດທີ່ກ່ຽວຂ້ອງ.

2 ການປ່ຽນແປງບາງສ່ວນແບບເລັກນ້ອຍ "(Minor Variation)" ໝາຍເຖິງ ການປ່ຽນແປງໃດໜຶ່ງຂອງຜະລິດຕະພັນທີ່ໄດ້ຂຶ້ນທະບຽນແລ້ວ ເຊິ່ງເປັນການປ່ຽນແປງທີ່ບໍ່ກະທົບເຖິງບັນຫາດ້ານຄຸນນະພາບ, ຄວາມປອດໄພ ແລະ ປະສິດທິພາບຂອງຜະລິດຕະພັນນັ້ນ ເຊັ່ນ: ການປັບປຸງລັກສະນະ, ເນື້ອໃນຂອງສະຫຼາກ, ເອກະສານກໍາກັບ, ແລະ ອື່ນໆ ແຕ່ຕ້ອງໄດ້ຮັບຮູ້ ແລະ ອະນຸມັດຈາກເຈົ້າໜ້າທີ່ຄຸ້ມຄອງຂອງປະເທດດັ່ງກ່າວ.

### ມາດຕາ 17 ຕົວຢ່າງທີ່ນໍາມາຂຶ້ນທະບຽນ

ຕົວຢ່າງທີ່ນໍາມາຂໍຂຶ້ນທະບຽນຕ້ອງມີຈໍານວນ ທີ່ ສູນວິໄຈ ອາຫານ ແລະ ຢາ ແຫ່ງຊາດ ກໍານົດ ສໍາລັບການວິໄຈ ແລະ ຕິດຕາມຄຸນນະພາບຫຼັງການຈໍາໜ່າຍ;

ສໍາລັບຕົວຢ່າງ ທີ່ ຜະລິດ, ປຸງແຕ່ງ ພາຍໃນເພື່ອຂໍຂຶ້ນທະບຽນ ຕ້ອງຜະລິດໃນຈໍານວນທີ່ເໝາະສົມຕາມຄວາມອາດສາມາດ ຂອງເຄື່ອງຈັກ ຫຼື ແຮງມ້າຕໍ່າສຸດ ສໍາລັບ ຂະໜາດຊຸດຜະລິດໜຶ່ງ.

### ມາດຕາ 18 ການວິໄຈຄຸນນະພາບ ແລະ ມາດຕະຖານ

ຜະລິດຕະພັນເສີມສຸຂະພາບ ຕ້ອງໄດ້ວິໄຈຄຸນນະພາບຕາມລາຍການ ດັ່ງລຸ່ມນີ້:

1 ການວິໄຈທາງຟີຊິກ ເປັນຕົ້ນ: ຮູບຮ່າງລັກສະນະພາຍນອກ, ນໍ້າໜັກ, ຄວາມແຂງ, ການແຕກຕົວ ຫຼື ການກະຈາຍຕົວ;

2 ການວິໄຈທາງເຄມີ;

3 ການວິໄຈທາງຈຸລິນຊີ ເປັນຕົ້ນ: Total Aerobic count, Total Yeast/Mold, Escherichia coli, Salmonellae, Staphylococcus. Aureus;

4 ການວິໄຈການປົນເປື້ອນຂອງໂລຫະໜັກ ເປັນຕົ້ນ: Lead(Pb), Cadmium(Cd), Mercury(Hg), Arsenic(As).

ລາຍການວິໄຈ ທີ່ກໍານົດມາຂ້າງເທິງນີ້ ແມ່ນເປັນພຽງຕົວຢ່າງສໍາລັບບາງຜະລິດຕະພັນ ເພື່ອຮັບປະກັນຄຸນນະພາບ, ເຊິ່ງ ຂອບເຂດ ມາດຕະຖານການວິໄຈ ແມ່ນ ສູນວິໄຈອາຫານ ແລະ ຢາ ແຫ່ງຊາດເປັນຜູ້ກໍານົດ, ສໍາລັບລາຍການວິໄຈອື່ນໆ ອາດຈະຖືກກໍານົດສະເພາະຂຶ້ນຕື່ມ ທີ່ຂຶ້ນກັບແຕ່ລະຮູບແບບຂອງຜະລິດຕະພັນ ແລະ ການປະເມີນຕາມເຕັກນິກການວິໄຈ ໂດຍ ອີງໃສ່ເອກະສານຄູ່ມືອາຊຽນ ແລະ ຄູ່ມືທີ່ກະຊວງສາທາລະນະສຸກໄດ້ກໍານົດໄວ້.

### ມາດຕາ 19 ສິດຂອງຜູ້ໄດ້ຮັບທະບຽນ

ຜູ້ທີ່ໄດ້ຮັບທະບຽນຜະລິດຕະພັນເສີມສຸຂະພາບມີສິດ ດັ່ງນີ້:

ມີສິດນໍາເຂົ້າ, ຜະລິດ, ປຸງແຕ່ງ ແຕ່ພຽງຜູ້ດຽວ; ພາຍຫຼັງຂຶ້ນທະບຽນແລ້ວມີສິດຈໍາໜ່າຍທົ່ວໄປຕາມທາງການກໍານົດ, ມອບສິດຈໍາໜ່າຍ ໃຫ້ບໍລິສັດ ຂາອອກ-ຂາເຂົ້າ, ບໍລິສັດຂາຍຍົກພາຍໃນດ້ານຢາ ແລະ ຜະລິດຕະພັນການແພດ ເປັນຕົວ



Scanned with CamScanner

ແທນຈຳໜ່າຍ ຜະລິດຕະພັນທີ່ໄດ້ຮັບຂຶ້ນທະບຽນແລ້ວ ບົນພື້ນຖານການເຫັນດີຂອງເຈົ້າຂອງຜະລິດຕະພັນ ແລະ ໄດ້ຮັບອະນຸຍາດຈາກ ກົມອາຫານ ແລະ ຢາ.

**ມາດຕາ 20 ສະຖານທີ່ຈຳໜ່າຍ**

ຜະລິດຕະພັນເສີມສຸຂະພາບ ທີ່ຈັດຕາມປະເພດເສີມສຸຂະພາບທາງດ້ານໜ້າທີ່ການ ແລະ ການຫຼຸດຄວາມສ່ຽງການເກີດພະຍາດ ແມ່ນອະນຸຍາດໃຫ້ຈຳໜ່າຍສະເພາະ ຢູ່ໃນສະຖານທີ່ບໍລິການດ້ານຢາ ແລະ ຜະລິດຕະພັນການແພດ ເທົ່ານັ້ນ, ສຳລັບຜະລິດຕະພັນເສີມສຸຂະພາບທີ່ຈັດຕາມປະເພດເສີມສຸຂະພາບເພື່ອບຳລຸງສຸຂະພາບໂດຍທົ່ວໄປ ແລະ ທາງດ້ານໂພສະນາການແມ່ນສາມາດຈຳໜ່າຍ ຢູ່ ຮ້ານຊັບພະສິນຄ້າທົ່ວໄປ ແຕ່ໃຫ້ຢູ່ໃນເງື່ອນໄຂ ການປະຕິບັດການເກັບຮັກສາທີ່ດີ.

**ມາດຕາ 21 ການປະຕິເສດ ການຂຶ້ນທະບຽນ**

1 ເອກະສານບໍ່ຄົບຖ້ວນຕາມທີ່ໄດ້ລະບຸໄວ້ໃນແບບຟອມ;

2 ຜະລິດຕະພັນເສີມສຸຂະພາບທີ່ມີລັກສະນະຮຽນແບບ ທາງດ້ານການຫຸ້ມຫໍ່ ແລະ ຊື່ການຄ້າ ທີ່ໄດ້ຖືກຮັບຮອງຂຶ້ນທະບຽນມາກ່ອນແລ້ວ;

3 ຜະລິດຕະພັນເສີມສຸຂະພາບທີ່ມີສ່ວນປະກອບບໍ່ສອດຄ່ອງຕາມຫຼັກວິຊາການ ມີການກ່າວອ້າງສັບພະຄຸນ, ໂອ້ອວດ ຫຼື ແອບອ້າງສັບພະຄຸນໃນການປິ່ນປົວ, ປິ່ນປົວ ຫຼື ກັນພະຍາດ, ຊວນເຊື່ອໄປໃນທາງທີ່ບໍ່ສອດຄ່ອງກັບຄຸນລັກສະນະຂອງຜະລິດຕະພັນ;

4 ການໃສ່ຊື່ຜະລິດຕະພັນເສີມສຸຂະພາບ ຫຼື ຮູບພາບ ທີ່ໄປໃນທາງບໍ່ສຸພາບ, ບໍ່ເໝາະສົມຕໍ່ວັດທະນະທຳອັນດີງາມ ຫຼື ອານາຈານ ເຮັດໃຫ້ເຂົ້າໃຈຜິດຈາກຄວາມຈິງ;

5 ຜະລິດຕະພັນເສີມສຸຂະພາບທີ່ມີສ່ວນປະກອບຂອງ ພືດ, ຕົ້ນໄມ້, ສັດ, ວິຕາມິນ ແລະ ແຮ່ທາດ, ທີ່ໄດ້ຫ້າມ ແລະ ບໍ່ສອດຄ່ອງກັບຂອບເຂດທີ່ໄດ້ກຳນົດ ຕາມລະບຽບການຂອງພາຍໃນ, ອາຊຽນ ແລະ ສາກົນ.

## ໝວດທີ 4

## ຫຼັກການກຳນົດເນື້ອໃນຂອງສະຫຼາກ

**ມາດຕາ 22 ຫຼັກການກຳນົດເນື້ອໃນຂອງສະຫຼາກ**

ການກຳນົດເນື້ອໃນສະຫຼາກ ຂອງຜະລິດຕະພັນເສີມສຸຂະພາບແມ່ນອີງໃສ່ຫຼັກການດັ່ງລຸ່ມນີ້:

1 ເນື້ອໃນສະຫຼາກຂອງຜະລິດຕະພັນເສີມສຸຂະພາບບໍ່ໃຫ້ອະທິບາຍ ຫຼື ນຳສະເໜີເນື້ອໃນສະຫຼາກໃດໜຶ່ງ ເພີ່ມເຕີມຈາກຂໍ້ມູນເດີມ ໂດຍມີການຕິດສະຫຼາກໃດໆທີ່ມີຄຳເວົ້າເກີນຮູບພາບ ຫຼື ອຸປະກອນອື່ນໆ ທີ່ອ້າງເຖິງ ຫຼື ແນະນຳ ໂດຍກົງ ແລະ ທາງອ້ອມ ໃນລັກສະນະທີ່ຫຼອກລວງໃຫ້ເຂົ້າໃຈຜິດ ຫຼື ຊວນເຊື່ອທີ່ຈະສ້າງຄວາມປະທັບໃຈທີ່ບໍ່ຖືກຕ້ອງກັບລັກສະນະຂອງ ຜະລິດຕະພັນ ດ້ານໃດດ້ານໜຶ່ງ; ສຳລັບຜະລິດຕະພັນພາຍໃນ ເນື້ອໃນຂອງສະຫຼາກ ແມ່ນຕ້ອງມີເອກະສານອ້າງອີງ;



Scanned with CamScanner

2 ຂໍ້ມູນທີ່ລະບຸໃສ່ ຕ້ອງມີຂະໜາດທີ່ເໝາະສົມ, ມີຄວາມກະຈ່າງແຈ້ງ, ຊັດເຈນ ແລະ ເຂົ້າໃຈງ່າຍ, ບໍ່ມີການອອກແບບທີ່ຄຸມເຄືອ ແລະ ຕ້ອງໄດ້ຮັບການຮັບຮອງ;

3 ຂໍ້ມູນຂອງສະຫຼາກ ຕ້ອງມີພາສາລາວ ຫຼື ພາສາລາວ ແລະ ພາສາອັງກິດ ຫຼື ພາສາລາວ ແລະ ພາສາຂອງປະເທດຜູ້ຜະລິດ;

4 ສໍາລັບ ຜະລິດຕະພັນເສີມສຸຂະພາບ ທີ່ນໍາເຂົ້າມາຂຶ້ນທະບຽນ ຖ້າບໍ່ມີເງື່ອນໄຂພິມເນື້ອໃນທີ່ຈໍາເປັນໃສ່ໃນສະຫຼາກເປັນພາສາລາວ, ບໍລິສັດ ທີ່ຮັບຜິດຊອບການນໍາເຂົ້າ ຕ້ອງປະກອບເອກະສານກໍາກັບ (ຟອຍ) ເປັນພາສາລາວໃສ່ໃນກັບກ່ອງ ທຸກຂະໜາດບັນຈຸ ກ່ອນການນໍາໄປຈໍາໜ່າຍ.

## ມາດຕາ 23 ເນື້ອໃນທີ່ສະແດງໃນສະຫຼາກ

1 **ຂໍ້ກໍານົດທົ່ວໄປກ່ຽວກັບສະຫຼາກປະກອບມີ:**

- ຊື່ຜະລິດຕະພັນ
- ຮູບແບບຂອງຜະລິດຕະພັນ
- ຊື່ ແລະ ຄວາມແຮງຂອງສ່ວນປະກອບ
- ຊຸດຜະລິດ ຫຼື ເລກໝາຍຊຸດຜະລິດ
- ວັນທີ່ຜະລິດ ຫຼື ວັນທີ່ໝົດອາຍຸ
- ວິທີການນໍາໃຊ້
- ຂໍ້ບົ່ງໃຊ້ ຫຼື ເປົ້າໝາຍໃນການໃຊ້
- ເງື່ອນໄຂຂອງການເກັບຮັກສາ
- ເລກທະບຽນຂອງປະເທດຜູ້ຜະລິດ ແລະ ເລກທະບຽນພາຍໃນ
- ຊື່ ແລະ ທີ່ຢູ່ຂອງຜູ້ຜະລິດ
- ຊື່ ແລະ ທີ່ຢູ່ຂອງຜູ້ທີ່ໄດ້ຮັບສິດໃນການຈໍາໜ່າຍ / ການນໍາເຂົ້າ
- ຄໍາເຕືອນ (ຖ້າມີ)
- ຂະໜາດບັນຈຸ
- ຂໍ້ແນະນໍາພິເສດ

2 **ສະຫຼາກນ້ອຍ / ສະຫຼາກຫຸ້ມຫໍ່ / ແຜງບັນຈຸ ຢ່າງໜ້ອຍຕ້ອງປະກອບມີ ຂໍ້ມູນດັ່ງລຸ່ມນີ້:**

- ຊື່ຜະລິດຕະພັນ ແລະ ຊື່ການຄ້າ ທີ່ເໝາະສົມ
- ເລກທະບຽນ ຂອງປະເທດຜູ້ຜະລິດ
- ຊຸດ ຫຼື ເລກທີຊຸດຜະລິດ
- ວັນທີຜະລິດ ແລະ ວັນໝົດອາຍຸ ຫຼື ວັນໝົດອາຍຸຢ່າງດຽວ
- ສາມາດລະບຸຂໍ້ມູນອື່ນໆຕື່ມອີກຕາມຂໍ້ຮຽກຮ້ອງຂອງສະຫຼາກທົ່ວໄປ ໃນເອກະສານກໍາກັບ ຫຼື ໃສ່ໃນພາສະນະບັນຈຸຫຸ້ມຫໍ່.



Scanned with CamScanner

**ມາດຕາ 24 ລະຫັດເລກທະບຽນ ຜະລິດຕະພັນເສີມສຸຂະພາບ**

ຜະລິດຕະພັນເສີມສຸຂະພາບທີ່ໄດ້ຂຶ້ນທະບຽນ ແລ້ວ ຕ້ອງມີເຄື່ອງໝາຍເລກລະຫັດ ດັ່ງນີ້:

1 ຜະລິດຕະພັນເສີມສຸຂະພາບທີ່ຜະລິດພາຍໃນປະເທດມີເຄື່ອງໝາຍ XX (ເດືອນ), HSLXXXX (Health Supplement Local XXXX (ຕົວອັກ ສອນ ແລະ ເລກລຳດັບ)/ປີ;

2 ຜະລິດຕະພັນເສີມສຸຂະພາບນຳເຂົ້າຈາກຕ່າງປະເທດມີເຄື່ອງໝາຍ XX (ເດືອນ), HSIXXXX (Health Supplement Import XXXX) (ຕົວອັກສອນ ແລະ ເລກລຳດັບ)/ປີ;

## ໝວດທີ 5
## ການລຶບລ້າງ, ຖອນທະບຽນ ແລະ ອາຍຸຂອງໃບຢັ້ງຢືນການຂຶ້ນທະບຽນ

**ມາດຕາ 25 ການລຶບລ້າງທະບຽນ**

ຜະລິດຕະພັນເສີມສຸຂະພາບທີ່ໄດ້ ຂຶ້ນທະບຽນແລ້ວ ຈະຖືກລຶບລ້າງ ໃນກໍລະນີ ຜະລິດຕະພັນນັ້ນເກີດມີ ລັກສະນະຢ່າງໃດຢ່າງໜຶ່ງ ດັ່ງນີ້:

1 ບໍ່ມີຄຸນປະໂຫຍດ ບໍ່ສອດຄ່ອງຕາມມາດຕະຖານຄຸນນະພາບ ຫຼື ບໍ່ມີທັງສອງຢ່າງຕາມທີ່ໄດ້ຂຶ້ນທະບຽນໄວ້ ;

2 ບໍ່ປອດໄພຕໍ່ຜູ້ຊົມໃຊ້ ທີ່ພົວພັນເຖິງຄຸນນະພາບຂອງເຈົ້າຂອງຜະລິດຕະພັນ ໂດຍມີຫຼັກຖານຈາກເຈົ້າ ໜ້າທີ່ກວດກາ;

3 ບໍລິສັດຜູ້ທີ່ເປັນເຈົ້າຂອງຜະລິດຕະພັນ (ຜູ້ຜະລິດ) ປະກາດລົບລ້າງ / ຖືກສັ່ງປິດກິດຈະການ;

4 ຜະລິດຕະພັນເສີມສຸຂະພາບທີ່ມີສ່ວນປະກອບຂອງ ວິຕາມິນ, ແຮ່ທາດ, ວັດຖຸດິບຈາກພືດ,ຈາກສັດ ແລະ ສານຊີວະພາບອື່ນໆ ທີ່ເກີນຂອບເຂດການອະນຸຍາດ ແລະ ມີສ່ວນປະສົມຂອງສານຕ້ອງຫ້າມ;

5 ບໍ່ໄດ້ນຳເຂົ້າ ແລະ ບໍ່ໄດ້ແຈ້ງເຫດຜົນການເຄື່ອນໄຫວຕະຫຼອດອາຍຸຂອງໃບຢັ້ງຢືນຂຶ້ນທະບຽນ;

6 ຖ້າບໍ່ມາຕໍ່ທະບຽນພາຍຫຼັງທະບຽນໝົດອາຍຸ 1 ປີ.

**ມາດຕາ 26 ການຖອນທະບຽນ**

ຜະລິດຕະພັນເສີມສຸຂະພາບ ທີ່ໄດ້ຮັບການຂຶ້ນທະບຽນແລ້ວ ຈະສາມາດຖືກຖອນທະບຽນຜະລິດຕະພັນໃນກໍລະນີ ດັ່ງນີ້:

1 ມີການປ່ຽນແປງວັດຖຸປະສົງຂອງການນຳໃຊ້ ເຊັ່ນ: ການນຳໃຊ້ເປັນຢາເພື່ອປິ່ນປົວ ຫຼື ກັນພະຍາດ;

2 ການໂຄສະນາຜະລິດຕະພັນເສີມສຸຂະພາບທີ່ບໍ່ສອດຄ່ອງຕາມລະບຽບຫຼັກການ ວິທີການ ແລະ ເງື່ອນໄຂ ທີ່ວາງອອກ;

3 ຜະລິດຕະພັນເສີມສຸຂະພາບ ທີ່ບໍ່ມີສ່ວນປະກອບ ແລະ ຊັບພະຄຸນ ຕາມທີ່ໄດ້ຂຶ້ນທະບຽນໄວ້ ຫຼື ເປັນຜະລິດຕະພັນເສີມສຸຂະພາບ ປອມ ຫຼື ຮຽນແບບ ຈາກຜະລິດຕະພັນທີ່ໄດ້ຂຶ້ນທະບຽນແລ້ວ;

4 ບໍ່ປະຕິບັດການແກ້ໄຂຂໍ້ບົກຜ່ອງ ແລະ ບໍ່ດຳເນີນການຕິດຕາມຄວາມປອດໄພພາຍຫຼັງການຈຳໜ່າຍ ທີ່ພົວພັນເຖິງດ້ານ ປະສິດທິພາບ, ຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນ ທີ່ມີຄວາມສ່ຽງຕໍ່ຜູ້ບໍລິໂພກ;

5 ບໍລິສັດຜູ້ທີ່ເປັນເຈົ້າຂອງຜະລິດຕະພັນ (ຜູ້ຜະລິດ) ປະກາດລົບລ້າງ / ຖືກສັ່ງປິດກິດຈະການ;



Scanned with CamScanner

6 ມີຂໍ້ມູນແຈ້ງເຕືອນຈາກ ພາຍໃນ, ພາກພື້ນ ແລະ ສາກົນ ກ່ຽວກັບ ຄວາມບໍ່ປອດໄພ ຕໍ່ຜູ້ຊົມໃຊ້.

**ມາດຕາ 27 ອາຍຸໃບຢັ້ງຢືນການຂຶ້ນທະບຽນ**

ອາຍຸໃບທະບຽນຜະລິດຕະພັນເສີມສຸຂະພາບ ມີອາຍຸນຳໃຊ້ 05 ປີ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ເຈົ້າຂອງທະບຽນຕ້ອງໄດ້ຍື່ນຄຳຮ້ອງເພື່ອຂໍຕໍ່ທະບຽນນຳ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຕາມແບບຟອມ ທີ່ກຳນົດໃຫ້ພາຍໃນ 90 ວັນ ກ່ອນໝົດອາຍຸກຳນົດໃຊ້, ກໍລະນີຍື່ນຄຳຮ້ອງຕໍ່ທະບຽນ ພາຍຫຼັງໝົດອາຍຸທະບຽນ ແມ່ນຈະໄດ້ຮັບເອກະສານ ແລະ ເກັບຄ່າທຳນຽມ ຕາມການຂຶ້ນທະບຽນ.

## ໝວດທີ 6
## ວ່າດ້ວຍການເສຍຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 28 ການເສຍຄ່າທຳນຽມ, ຄ່າບໍລິການ**

ສຳລັບການຄິດໄລ່ຄ່າທຳນຽມ ແລະ ຄ່າບໍລິການ ແມ່ນອີງໃສ່ລັດຖະບັນຍັດເກັບຄ່າທຳນຽມທີ່ມີການປັບປຸງໃນແຕ່ລະໄລຍະ, ການຈ່າຍຄ່າທຳນຽມແມ່ນຈ່າຍເວລາຍື່ນຟອມ, ພ້ອມດວ້ຍ ຈ່າຍຄ່າບໍລິການສຳລັບການຄົ້ນຄວ້າພິຈາລະນາ ໃນເວລາດຽວກັນ ແລະ ຖ້າລາຍການຂອງຜະລິດຕະພັນເສີມສຸຂະພາບ ທີ່ບໍ່ຖືກຮັບຮອງຂຶ້ນທະບຽນ ເຈົ້າຂອງຜະລິດຕະພັນແມ່ນບໍ່ສາມາດຖອນເອົາຄ່າທຳນຽມຄືນ.

**ມາດຕາ 29 ຄ່າກວດກາວິໄຈດ້ານຄຸນນະພາບ**

ຄ່າກວດກາວິໄຈດ້ານຄຸນນະພາບແມ່ນ ອີງຕາມການຄິດໄລ່ຕົວຈິງຂອງໜ່ວຍງານວິໄຈທີ່ກ່ຽວຂ້ອງກຳນົດອອກ, ໃນກໍລະນີຜູ້ຂໍອະນຸຍາດ ສາມາດສະໜອງໜັງສືຢັ້ງຢືນການວິໄຈກວດກາດ້ານຄຸນນະພາບຈາກ ສູນວິໄຈອາຫານ ແລະ ຢາແຫ່ງຊາດ ແມ່ນຈະບໍ່ໄດ້ກວດກາວິໄຈດ້ານຄຸນນະພາບຄືນໃໝ່.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 30 ຂໍ້ຫ້າມສຳລັບຜູ້ປະກອບການ**

ຫ້າມຜູ້ປະກອບການມີພຶດຕິກຳດັ່ງນີ້:

1 ຜະລິດ, ປຸງແຕ່ງ, ນຳເຂົ້າ ແລະ ຈຳໜ່າຍຜະລິດຕະພັນເສີມສຸຂະພາບໂດຍ ບໍ່ໄດ້ຂຶ້ນທະບຽນ ຢູ່ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ;

2 ຜະລິດ, ປຸງແຕ່ງ ນຳເຂົ້າ ແລະ ຈຳໜ່າຍ ຜະລິດຕະພັນເສີມສຸຂະພາບ ປອມແປງ;



Scanned with CamScanner

3 ປອມແປງເອກະສານ ແລະ ນຳໃຊ້ເອກະສານປອມເພື່ອຍື່ນຂໍຂຶ້ນທະບຽນ;

4 ໂຄສະນາທຸກຮູບແບບໂດຍບໍ່ໄດ້ຮັບອະນຸຍາດ ຈາກ ກົມອາຫານ ແລະ ຢາ;

5 ຜະລິດ, ປຸງແຕ່ງ, ນຳເຂົ້າ ແລະ ຈຳໜ່າຍຜະລິດຕະພັນເສີມສຸຂະພາບທີ່ບໍ່ໄດ້ມາດຕະຖານ ແລະ ປະສົມສານຕ້ອງຫ້າມ ຕາມທີ່ພາຍໃນ ແລະ ສາກົນກຳນົດອອກ;

6 ໃຊ້ສິດແອບອ້າງ ແລະ ນາບຄູ່ພະນັກງານ ແລະ ເຈົ້າໜ້າທີ່;

7 ມີພຶດຕິກຳອື່ນທີ່ເປັນການລະເມີດຕໍ່ລະບຽບກົດໝາຍ.

### ມາດຕາ 31 ຂໍ້ຫ້າມສຳລັບພະນັກງານ ອາຫານ ແລະ ຢາ

ຫ້າມເຈົ້າໜ້າທີ່ອາຫານ ແລະ ຢາມີພຶດຕິກຳດັ່ງນີ້:

1 ປະຕິບັດໜ້າທີ່ຂາດຄວາມຍຸຕິທຳ, ລຳອຽງ ແລະ ບໍ່ຖືກຕ້ອງຕາມລະບຽບກົດໝາຍ;

2 ກົດໜ່ວງຖ່ວງດຶງຂັ້ນຕອນການຂຶ້ນທະບຽນ, ທວງເອົາສິນບົນ, ຮຽກຄ່າຕອບແທນ ສວຍໃຊ້ໜ້າທີ່ຕຳແໜ່ງສິດ ແລະ ໜ້າທີ່ ທາງລັດຖະການ ເພື່ອຜົນປະໂຫຍດສ່ວນຕົວ;

3 ປອມແປງເອກະສານ ແລະ ນຳໃຊ້ເອກະສານປອມ ຫຼື ສະໜອງຂໍ້ມູນທີ່ເປັນຄວາມລັບຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ບໍ່ໄດ້ຮັບການອະນຸຍາດ;

4 ປົກປິດ, ສະໜັບສະໜູນ ຊ່ວຍເຫຼືອ ແລະ ສົມຮູ້ຮ່ວມຄິດກັບຜູ້ປະກອບການທຸລະກິດກ່ຽວກັບຜະລິດຕະພັນເສີມສຸຂະພາບ ທີ່ບໍ່ບັນລຸມາດຕະຖານຄຸນນະພາບ ແລະ ຄວາມປອດໄພ;

5 ມີພຶດຕິກຳອື່ນທີ່ເປັນການລະເມີດຕໍ່ລະບຽບກົດໝາຍ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 32 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນເຄື່ອນໄຫວການຈັດຕັ້ງປະຕິບັດສິ່ງເສີມໃຫ້ ຜະລິດຕະພັນເສີມສຸຂະພາບ ໄດ້ຮັບການຂຶ້ນທະບຽນ ກ່ອນການຜະລິດ, ປຸງແຕ່ງ, ນຳເຂົ້າ ແລະ ຈໍລະຈອນຈຳໜ່າຍ ຈະໄດ້ຮັບການຍ້ອງຍໍຊົມເຊີຍ ຫຼື ຮັບນະໂຍບາຍຕອບແທນອື່ນໆຈາກການຈັດຕັ້ງຂັ້ນເທິງ ຕາມຄວາມ ເໝາະສົມ.

### ມາດຕາ 33 ມາດຕະການຕໍ່ຜູ້ລະເມີດ

1 ການປະພຶດທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມປະຕິບັດວິໄນ, ປັບໃໝ, ໃຊ້ຄວາມເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາຕາມແຕ່ລະກໍລະນີໜັກ ຫຼື ເບົາ.

Scanned with CamScanner

2 ການຜະລິດ, ປຸງແຕ່ງ ແລະ ນຳເຂົ້າຜະລິດຕະພັນເສີມສຸຂະພາບທີ່ບໍ່ໄດ້ຂຶ້ນທະບຽນ ຢູ່ ກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ ຈະຖືກກ່າວເຕືອນ ແລະ ປັບໄໝ 100% ຂອງມູນຄ່າຕາມຈຳນວນຂອງຜະລິດຕະພັນເສີມສຸຂະພາບດັ່ງກ່າວ;

3 ການຜະລິດ ແລະ ນຳເຂົ້າ ແລະ ຈຳໜ່າຍຜະລິດຕະພັນເສີມສຸຂະພາບປອມແປງ, ບໍ່ໄດ້ມາດຕະຖານ ຈະຖືກກ່າວເຕືອນ, ຍຶດ ແລະ ປັບ ໃໝ 200% ຂອງມູນຄ່າຕາມຈຳນວນຂອງຜະລິດຕະພັນເສີມສຸຂະພາບດັ່ງກ່າວ;

4 ການປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມແປງເພື່ອຂຶ້ນທະບຽນ ຈະຖືກປັບໄໝ 1,000,000 ກີບ ຕໍ່ສະບັບ;

## ໝວດທີ 9
## ບົດບັນຍັດສຸດທ້າຍ

### ມາດຕາ 34 ການຈັດຕັ້ງປະຕິບັດ

1 ກະຊວງສາທາລະນະສຸກ ມອບໃຫ້ກົມອາຫານ ແລະ ຢາ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

2 ທຸກອົງການຈັດຕັ້ງທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນ ຈົ່ງໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດເປັນຢ່າງດີ.

### ມາດຕາ 35 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງ 60 ວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ

ລັດຖະມົນຕີ

ປອ.ດຣ. ບຸນແຝງ ພູມມະໄລສິດ



Scanned with CamScanner